ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາປະຊາຊົນແຂວງ

ເລກທີ 22/ສພຂ.ຊຍ

ໄຊຍະບຸລີ,ວັນທີ 31/12/2021.

**ມະຕິ**

**ກອງປະຊຸມສະພາປະຊາຊົນແຂວງ**

**ວ່າດ້ວຍການຮັບຮອງເອົາບົດລາຍງານການເຄື່ອນໄຫວວຽກງານ**

**ປະຈຳປີ 2021 ແລະ ທິດທາງແຜນການ ປະຈຳປີ 2022 ຂອງສະພາປະຊາຊົນແຂວງ II.**

- ອີງຕາມ ກົດໝາຍວ່າດ້ວຍການປັບປຸງບາງມາດຕາ ຂອງກົດໝາຍ ວ່າດ້ວຍສະພາປະຊາຊົນຂັ້ນແຂວງ ສະບັບເລກທີ 82/ສພຊ, ນະຄອນຫຼວງວຽງຈັນ ລົງວັນທີ 30 ມິຖຸນາ 2020 ມາດຕາ 59 ກອງປະຊຸມສະໄໝສາມັນປະຈຳປີຂອງສະພາປະຊາຊົນແຂວງ.
- ອີງຕາມ ບົດລາຍງານ ການເຄື່ອນໄຫວຈັດຕັ້ງປະຕິບັດວຽກງານ ປະຈຳປີ 2021 ແລະ ທິດທາງແຜນການ ປະຈຳປີ 2022 ຂອງສະພາປະຊາຊົນແຂວງ ຊຸດທີ II.

ຜ່ານການ ພິຈາລະນາ ຢ່າງເລິກເຊິ່ງ, ຖີ່ຖ້ວນ ຂອງສະມາຊິກສະພາປະຊາຊົນແຂວງ ຕໍ່ບົດລາຍງານການເຄື່ອນໄຫວວຽກງານ ປະຈຳປີ 2021 ແລະ ທິດທາງແຜນການ ປະຈຳປີ 2022 ຂອງສະພາປະຊາຊົນແຂວງ ແລະ ບົດປະກອບຄຳເຫັນຂອງແນວລາວສ້າງຊາດແຂວງ ໃນວາລະດຳເນີນກອງປະຊຸມສະໄໝສາມັນ ເທື່ອທີ 2 ຂອງສະພາປະຊາຊົນແຂວງ ຊຸດທີ II ຄັ້ງວັນທີ 31 ທັນວາ 2021.

**ກອງປະຊຸມ ຕົກລົງ:**

**ມາດຕາ 1 ຮັບຮອງເອົາບົດລາຍງານ ການເຄື່ອນໄຫວວຽກງານ ປະຈຳປີ 2021 ຂອງສະພາປະຊາຊົນແຂວງ ຊຸດທີ II.**

ກອງປະຊຸມເຫັນດີ ຮັບຮອງເອົາບົດລາຍງານ ການເຄື່ອນໄຫວວຽກງານ ປະຈຳປີ 2021 ຂອງສະພາປະຊາຊົນແຂວງ ຊຸດທີ II ເຊິ່ງສາມາດຈັດຕັ້ງປະຕິບັດ ສິດ ແລະ ໜ້າທີ່ຂອງຕົນ ມີຜົນສຳເລັດຫຼາຍດ້ານດັ່ງນີ້:

1.) ໄດ້ປະຕິບັດ ພາລະບົດບາດ ດ້ານນິຕິບັນຍັດ ໃນການປະກອບຄຳເຫັນຕໍ່ຮ່າງກົດໝາຍໄດ້ 17 ສະບັບ; ຄົ້ນຄວ້າ ພິຈາລະນາ ແລະ ຮັບຮອງເອົານິຕິກຳໃຕ້ກົດໝາຍຂອງແຂວງ 3 ສະບັບ; ສ້າງນິຕິກຳຮັບໃຊ້ວຽກງານສະພາປະຊາຊົນແຂວງ ຊຸດທີ II ໄດ້ 6 ສະບັບ ແລະ ສ້າງບົດບັນທຶກຮ່ວມກັນໄກປະສານງານ ລະຫວ່າງ ສະພາປະຊາຊົນແຂວງ ກັບ ພະແນກການ, ອົງການ ທີ່ກ່ຽວຂ້ອງຂອງແຂວງ ໄດ້ 27 ສະບັບ;

2.) ຄົ້ນຄວ້າ ແລະ ພິຈາລະນາ ຮັບຮອງເອົາບັນຫາສຳຄັນຂອງແຂວງ 13 ເນື້ອໃນ, ໃນນີ້: ວຽກງານຂອງສະພາປະຊາຊົນແຂວງ 4 ເນື້ອໃນ ແລະ ວຽກງານຂອງອົງການປົກຄອງແຂວງ 9 ເນື້ອໃນ;

3.) ຕິດຕາມການຈັດຕັ້ງປະຕິບັດ ລັດຖະທຳມະນູນ, ກົດໝາຍ, ນິຕິກຳໃຕ້ກົດໝາຍ, ມະຕິກອງປະຊຸມສະພາປະຊາຊົນແຂວງ, ປະເມີນ ນິຕິກຳໃຕ້ກົດໝາຍຂອງອົງການປົກຄອງແຂວງ 14 ສະບັບ; ລົງຕິດຕາມກວດກາຜົນກະທົບຈາກໄພນ້ຳຖ້ວມ, ບັນດາໂຄງການລົງທຶນຂອງລັດ ລວມທັງໝົດ 48 ຈຸດ, ກວມເອົາ 11 ເມືອງ;

ໄດ້ຮັບຄຳຮ້ອງຂໍຄວາມເປັນທຳຈາກປະຊາຊົນບັນດາເຜົ່າ ຈຳນວນ 13 ເລື່ອງ ແລະ ໄດ້ສົມທົບພາກສ່ວນທີ່ຈັດກອງປະຊຸມຄົ້ນຄວ້າແກ້ໄຂ 5 ຄັ້ງ ແກ້ໄຂໄດ້ 8 ເລື່ອງ;

4.) ການສ້າງຄວາມເຂັ້ມແຂງ ໄດ້ສ້າງນິຕິກຳ ວ່າດ້ວຍການເຄື່ອນໄຫວວຽກງານສະພາປະຊາຊົນແຂວງ 5 ສະບັບ, ສົມທົບຄະນະປະຈຳພັກແຂວງສ້າງແຜນກຳນົດພະນັກງານ-ນຳພາ-ຄຸ້ມຄອງຂັ້ນແຂວງຄຸ້ມຄອງ, ບັນຈຸຊັບຊ້ອນບຸກຄະລາກອນ ດຳລົງຕຳແໜ່ງຕາມຄວາມເໝາະສົມ; ບັນຈຸຊັບຊ້ອນສະມາຊິກສະພາປະຊາຊົນແຂວງ ປະຈຳເຂດເລືອກຕັ້ງເມືອງ ເຂົ້າສັງກັດ 03 ຄະນະກຳມະການ; ເຂົ້າຮ່ວມກອງປະຊຸມຝຶກອົບຮົມຍົກລະດັບຂີດຄວາມສາມາດໃຫ້ແກ່ສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນແຂວງ ໄດ້ 3 ຄັ້ງ;

5.) ໄດ້ລົງພົບປະ ແລະ ເຜີຍແຜ່ຜົນສຳເລັດກອງປະຊຸມຄັ້ງປະຖົມມະລຶກຂອງສະພາແຫ່ງຊາດ ຊຸດທີ IX ແລະ ສະພາປະຊາຊົນແຂວງ ຊຸດທີ II ໄດ້ 235 ຈຸດ, ໃນນີ້ ສຳນັກງານອ້ອມຂ້າງແຂວງ-ເມືອງ 17 ຈຸດ ແລະ 218 ບ້ານ ມີຜູ້ເຂົ້າຮ່ວມທັງໝົດ 35,459 ເທື່ອຄົນ, ຍິງ 12,278 ເທື່ອຄົນ; ລົງຕິດຕາມ ແລະ ຊ່ວຍເຫຼືອປະຊາຊົນທີ່ຖືກຜົນກະທົບຈາກໄພພິບັດນ້ຳຖ້ວມ, ແຜ່ນດິນໄຫວ ໄດ້ 6 ເມືອງ ແລະ ນຳເຄື່ອງຊ່ວຍເຫຼືອມອບໃຫ້ການຈັດຕັ້ງ, ຄອບຄົວປະຊາຊົນທີ່ຖືກຜົນກະທົບຈາກໄພທຳມະຊາດ, ຄອບຄົວທຸກຍາກ ມູນຄ່າ 198.350.000 ກີບ(ໜຶ່ງຮ້ອຍເກົ້າສິບແປດລ້ານ ສາມແສນຫ້າສິບພັນກີບ);

6.) ການເຄື່ອນໄຫວວຽກງານການຕ່າງປະເທດ ໄດ້ສົມທົບກັບອົງການປົກຄອງແຂວງ ເຄື່ອນໄຫວວຽກງານການຕ່າງປະເທດ ຕາມກົນໄກການຮ່ວມມືລະຫວ່າງ ແຂວງໄຊຍະບູລີ ກັບ ສສ ຫວຽດນາມ ແລະ ລາຊະອານາຈັກໄທ; ເຂົ້າຮ່ວມເຊັນບົດບັນທຶກການຮ່ວມມື ມິດຕະພາບ ລະຫວ່າງ ອົງການປົກຄອງແຂວງ ໄຊຍະບູລີ ກັບ ຄະນະກຳມະການປະຊາຊົນ ແຂວງທ້າຍບິ່ງ ສສ ຫວຽດນາມ ແລະ ນຳສົ່ງວິຊາການ ໄປຍົກລະດັບດ້ານພາສາຫວຽດນາມ ທີ່ແຂວງຊົນລາ ສສ ຫວຽດນາມ ຈຳນວນ 6 ຄົນ.

**ມາດຕາ 2 ຮັບຮອງເອົາແຜນການເຄື່ອນໄຫວ ປະຈຳປີ 2022 ຂອງສະພາປະຊາຊົນແຂວງ ຊຸດທີ II**

ກອງປະຊຸມເຫັນດີຮັບຮອງເອົາທິດທາງແຜນການ ປະຈຳປີ 2022 ດັ່ງນີ້:

1.) ຄົ້ນຄວ້າ ແລະ ປະກອບຄຳເຫັນໃສ່ຮ່າງກົດໝາຍ ໃຫ້ໄດ້ 30 ສະບັບ, ໃນນີ້ສ້າງໃໝ່ 12 ສະບັບ, ປັບປຸງ 18 ສະບັບ; ຄົ້ນຄວ້າ, ພິຈາລະນາ ແລະ ຮັບຮອງເອົາການສ້າງ, ປັບປຸງນິຕິກຳໃຕ້ກົດໝາຍຂອງແຂວງ ໃຫ້ໄດ້ 4 ສະບັບຂຶ້ນໄປ ໃນນີ້ນິຕິກຳໃຕ້ກົດໝາຍ ຂອງສະພາປະຊາຊົນແຂວງ 2 ສະບັບ ແລະ ຂອງອົງການປົກຄອງແຂວງ 2 ສະບັບ;

2.) ພິຈາລະນາ ແລະ ຮັບຮອງບັນຫາສຳຄັນຂອງແຂວງ ຜ່ານກົນໄກກອງປະຊຸມສະໄໝສາມັນເທື່ອທີ 3 ແລະ ເທື່ອທີ 4 ຂອງສະພາປະຊາຊົນແຂວງ ຊຸດທີ II ຕາມມາດຕາ 59 ແລະ ມາດຕາ 60 ຂອງກົດໝາຍ ວ່າດ້ວຍການປັບປຸງບາງມາດຕາ ຂອງກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ;

3.) ຕິດຕາມ ກວດກາ ແລະ ຊຸກຍູ້ ມະຕິກອງປະຊຸມສະພາປະຊາຊົນແຂວງ ຊຸດທີ II ເປັນຕົ້ນ: ມະຕິກອງປະຊຸມຄັ້ງປະຖົມມະລຶກ ຈຳນວນ 8 ສະບັບ ແລະ ມະຕິກອງປະຊຸມສະໄໝສາມັນ ເທື່ອທີ 2 ຈຳນວນ 7 ສະບັບ; ຕິດຕາມຊຸກຍູ້ ການຈັດຕັ້ງປະຕິບັດວາລະແຫ່ງຊາດ; ການຈັດຕັ້ງປະຕິບັດ ມາດຕະການປ້ອງກັນ ແລະ ຄວບຄຸມ ພະຍາດ ໂຄວິດ -19 ແລະ ການລະບາດຂອງພະຍາດຕາມລະດູການ;

4.) ສຸມໃສ່ ຝຶກອົບຮົມຍົກສູງຂີດຄວາມສາມາດໃຫ້ສະມາຊິກສະພາປະຊາຊົນແຂວງ, ພະນັກງານ-ລັດຖະກອນ ຕາມແຜນການຂອງສະພາແຫ່ງຊາດ; ຍາດແຍ່ງງົບປະມານຈາກສະພາແຫ່ງຊາດ ແລະ ອົງການປົກຄອງແຂວງ ເພື່ອມາຈັດຝຶກອົບຮົມຢູ່ທ້ອງຖິ່ນ ໃຫ້ໄດ້ 2 ຄັ້ງ; ສືບຕໍ່ປະສານສົມທົບກັບອົງການປົກຄອງທ້ອງຖິ່ນ ເຊັນບົດບັນທຶກ ວ່າດ້ວຍການປະສານງານລະຫວ່າງ ສະພາປະຊາຊົນແຂວງ ກັບ ອົງການປົກຄອງແຂວງ ໃຫ້ສຳເລັດ; ສືບຕໍ່ປັບປຸງກົງຈັກ, ບັນຈຸຊັບຊ້ອນບຸກຄະລາກອນ ດຳລົງຕຳແໜ່ງງານໃຫ້ເໝາະສົມ ແລະ ເອົາໃຈໃສ່ປັບປຸງແບບແຜນວິທີການເຮັດວຽກ ໃຫ້ມີຄວາມເຂັ້ມແຂງ;

5.) ສືບຕໍ່ປັບປຸງແບບແຜນການເຄື່ອນໄຫວຂອງສະມາຊິກສະພາປະຊາຊົນແຂວງ ປະຈຳເຂດເລືອກຕັ້ງເມືອງ ໃນການປະສານສົມທົບກັບອົງການປົກຄອງເມືອງ ອຳນວຍຄວາມສະດວກໃນການເຄື່ອນໄຫວ, ການປະຕິບັດໜ້າທີ່ວຽກງານຕາມພາລະບົດບາດ ໃຫ້ກົມກຽວກວ່າເກົ່າເປັນຕົ້ນ: ການກະກຽມເນື້ອໃນກອງປະຊຸມສະພາປະຊາຊົນແຂວງແຕ່ລະຄັ້ງ, ການពិຈາລະນາ

ແລະ ມະຕິກອງປະຊຸມສະພາປະຊາຊົນແຂວງ;

ສືບຕໍ່ລົງເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນ ເທື່ອທີ 2 ແລະ ເທື່ອທີ 3 ຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນແຂວງ ຕິດພັນກັບການເກັບກຳບັນຫາຕ່າງໆຂອງຜູ້ມີສິດເລືອກຕັ້ງ, ວິເຄາະ-ວິໃຈ ຄຳເຫັນຂອງອົງການແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າ, ອົງການຈັດຕັ້ງມະຫາຊົນ ເພື່ອສົມທົບກັບອົງການປົກຄອງແຂວງ, ເມືອງ, ແກ້ໄຂຄຳສະເໜີ ແລ້ວລາຍງານມາຍັງຄະນະປະຈຳສະພາປະຊາຊົນແຂວງ;

6.) ສືບຕໍ່ປະຕິບັດນະໂຍບາຍວຽກງານການຕ່າງປະເທດ ຂອງພັກ-ລັດ; ເພີ່ມທະວີການພົວພັນ ກັບ ສະພາແຫ່ງຊາດ, ອົງການປົກຄອງແຂວງ ໃນການຮ່ວມມືກັບປະເທດເພື່ອນມິດຍຸດທະສາດ ເພື່ອຍາດແຍ່ງທຶນຮອນ, ບົດຮຽນ ມາພັດທະນາສະພາປະຊາຊົນແຂວງ; ສ້າງແຜນເຄື່ອນໄຫວແລກປ່ຽນບົດຮຽນ ດ້ວຍຮູບແບບຕ່າງໆ ກັບ ສະພາປະຊາຊົນແຂວງທ້າຍບິ່ງ, ເຊີນລາ ແລະ ແຂວງອື່ນໆ ຂອງ ສສ ຫວຽດນາມ.

**ມາດຕາ 3 ການຈັດຕັ້ງປະຕິບັດ**

ຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ, ຄະນະປະຈຳສະພາປະຊາຊົນແຂວງ, ສະມາຊິກ ສະພາປະຊາຊົນແຂວງ, ຄະນະກຳມະການ ແລະ ພາກສ່ວນກ່ຽວຂ້ອງ ຈັດຕັ້ງປະຕິບັດມະຕິສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 4 ຜົນສັກສິດ**

ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ສະພາປະຊາຊົນແຂວງ**

**ປະທານ**

ເພັງນິລັນ ຄຳພັນເພັງ